## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 07 ມີນາ 2009 (03-07-2010)

---

## <u>ເມື່ອສະມາຊິກຄຣິສຕະຈັກບໍ່ຖືກຕ້ອງປອງດອງກັນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (1 ໂກຣິນໂທ 1:10-15, 26-29; 3:1-4)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນກ່ຽວກັບການແບ່ງແຍກຢູ່ໃນຄຣິສຕະຈັກ

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບໍ່ມີກຸ່ມຂອງຊຸມຊົນໃດ ມີຄວາມຄິດເຫັນດີເຫັນພ້ອມກັນ ໃນທຸກໆ ເຫດການທີ່ເກີດຂຶ້ນນັ້ນ ຍ່າງເປັນເອກກະສັນ ໃນບາງກໍຣະນີ, ຄວາມແຕກຕ່າງຂອງຂໍ້ຄິດ ເປັນຜົນສະທ້ອນກໍ່ໃຫ້ເກີດມີຈິດໃຈແຂງກະດ້າງ ແລະການຕິດພັນຢູ່ກັບການເຫັນແກ່ຕົວຫລາຍເກີນໄປ. ເມື່ອມີບັນຫາຢ່າງນີ້ເກີດຂຶ້ນໃນຄຣິສຕະຈັກ__ເກີດແລ້ວກໍຈະເກີດອີກ__ ການຮັບໃຊ້ຂອງຄຣິສຕະຈັກໃນຊຸມຊົນຈະໄດ້ຮັບແຕ່ສິ່ງທີ່ໜ້າອັບອາຍ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ອຍທ່ານໃຫ້ເຂົ້າໃຈເຖິງຮາກເຫງົ້າ ຂອງສາຍເຫດຂອງຄວາມແຕກແຍກ ໃນຄຣິສຕະຈັກ ແລະຊ່ອຍໃນການຕັດສິນໃຈຕໍ່ເຫດການທີ່ເກີດຂຶ້ນ, ທ່ານຈະເປັນຜູ້ປ້ອງກັນ ຫລືເປັນຜູ້ຍຸຕິບັນຫາຄວາມແຕກແຍກໃນຄຣິສຕະຈັກຂອງທ່ານ?

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຖ້າຍານພາຫານະ ຫລືເຄື່ອງໃຊ້ຂອງທ່ານມີບາງສິ່ງບາງຢ່າງ ຜິດປົກກະຕິທ່ານຈະໃຊ້ມັນຕໍ່ ຫລືຈະສ້ອມແປງມັນ? ໃນເມື່ອມີບາງສິ່ງບາງຢ່າງທີ່ບໍ່ຖືກຕ້ອງໃນໂບດແລ້ວ, ສ່ວນຫລາຍສະມາຊິກຈະດຳຣົງຢູ່ຢ່າງນັ້ນ ຫລືຈະປົວແປງແກ້ໄຂ? ແລ້ວຖ້າພວກເຮົາລອງໆຢູ່ໄປກັບບັນຫາເຫລົ່ານັ້ນແລ້ວຈະມີຫຍັງເກີດຂຶ້ນ?
- ບົດຮຽນນີ້ຈະຊ່ອຍໃຫ້ນັກຮຽນໄດ້ມອງເຫັນ ເຫດຜົນຄວາມແຕກຕ່າງສຳລັບບັນຫາຂອງການແຕກແຍກ ໃນໂບດ ແລະເປັນສາເຫດໃຫ້ມີການແກ້ໄຂເພື່ອປ້ອງກັນ ຫລືດັດແປງແກ້ໄຂ.

## 1. ໃຫ້ຄວາມຈົງຮັກພັກດີຜິດທີ່: (1 ໂກຣິນໂທ 1:10-15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 1:10-15
- ຊາວໂກຣິນໂທໄດ້ເອົາຄວາມຈົງຮັກພັກດີຂອງເຂົາເຈົ້າໃສ່ທີ່ໃດ?
- ເຂົາເຈົ້າຄວນຈະເອົາຄວາມຈົງຮັກພັກດີຂອງເຂົາເຈົ້າຕໍ່ຜູ້ໃດ, ທີ່ໃດ?
- ທ່ານໄດ້ເອົາຄວາມຈົງຮັກພັກດີໄວ້ໃນທີ່ໃດ? ເປັນເພາະເຫດໃດ?
- ໃຫ້ຄົ້ນຄວ້າເຖິງເຣື່ອງ ຄຣິສຕຽນເມືອງໂກຣິນໂທທີ່ເອົາຄວາມຈົງຮັກພັກດີໄວ້ຜິດທີ່ ດ້ວຍເຫດຜົນອັນໃດ? ສິ່ງທີ່ໄດ້ຄົ້ນພົບນັ້ນຄືແນວໃດ?
- ຄຣິສຕະຈັກຕ້ອງຍຸຕິການແຕກຫັກ ແລະເລີ້ມຕົ້ນສ້ອມແຊມ.
- ພວກເຮົາຜູ້ມີຄວາມດີເດັ່ນທີ່ແຕກຕ່າງກັນ ແລະແບ່ງປັນຄວາມເຂົ້າໃຈຢ່າງດຽວກັນ ແລະການຖືກລົງໂທດຢ່າງດຽວກັນຄື ການພິພາກສາຢ່າງດຽວກັນໄດ້ແນວໃດ?
- ຄຳເວົ້າກໍ່ໃຫ້ເກີດຄວາມແຕກແຍກຄື ຄຳເວົ້າແນວໃດ?
- ທ່ານໂປໂລໄດ້ຮຽກຮ້ອງໃຫ້ຊາວໂກຣິນໂທໃຊ້ຄຳເວົ້າຂອງເຂົາເຈົ້າທີ່ຈະສ້າງສາໃຫ້ເປັນອັນນຶ່ງອັນດຽວກັນແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ໂກຣິນໂທ 1:10-15)

1. ຄວາມຈົງຮັກພັກດີຂອງຄຣິສຕຽນຊາວເມືອງໂກຣິນໂທໄດ້ຕົກຢູ່ໃນສະພາບຢ່າງໃດ? ສິ່ງເຫລົ່ານັ້ນໄດ້ເຮັດໃຫ້ຄວາມເປັນອັນນຶ່ງອັນດຽວກັນເປັນແນວໃດ?
2. ແມ່ນຫຍັງທີ່ທຳໃຫ້ຄຣິສຕະຈັກມີການແບ່ງແຍກກັນ?
3. ການເປັນນໍ້ານຶ່ງໃຈດຽວກັນ ໃນເມື່ອມີຄວາມແຕກຕ່າງກັນ ແລະບຸກຄະລິກສ່ວນຕົວນັ້ນສາມາດເປັນໄປໄດ້ບໍ່? ເປັນຫຍັງທຸກຄົນບໍ່ຕົກລົງກັນໂດຍເພິ່ງອຳນາດຂອງພຣະຄຣິດມາແກ້ໄຂໃນບັນຫາເຫລົ່ານັ້ນ?
4. ທ່ານໂປໂລໄດ້ຮຽນຮູ້ບັນຫາຕ່າງໆ ໃນຄຣິສຕະຈັກເມືອງໂກຣິນໂທຢ່າງໃດແດ່?

## 2. ຄວາມທະນົງຕົວຂອງມະນຸດ: (1 ໂກຣິນໂທ 1:26-29)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 1:26-29
- ຫລັງຈາກເຂົາເຈົ້າມາເປັນຄຣິສຕຽນລະຍະນຶ່ງແລ້ວແມ່ນຫຍັງທີ່ເກີດຂຶ້ນທີ່ເຫັນໄດ້ຢ່າງຈະແຈ້ງ ?
- ທ່ານໂປໂລໄດ້ບອກຄົນໃນຄຣິສຕະຈັກເມືອງໂກຣິນໂທວ່າເຂົາເຈົ້າໄດ້ລືມໄປວ່າເຂົາເຈົ້າມາຈາກໃສ.
- ມັນເປັນຄຳຍ້ອງຍໍ ຫລືເປັນຄຳດູຖູກທີ່ບອກບາງຄົນວ່າ "ທ່ານລືມແລ້ວບໍ່ວ່າທ່ານມາຈາກໃສ"?
- ທ່ານໂປໂລໄດ້ຊີ້ແຈງໃຫ້ເຂົາເຈົ້າຮູ້ວ່າ ເຂົາເຈົ້າເປັນຜູ້ທີ່ພຣະເຈົ້າຊົງເລືອກເຂົາເຈົ້າ.
- ການແບ່ງແຍກໃນຄຣິສຕະຈັກຈະມີການແກ້ໄຂໄດ້ ຖ້າສະມາຊິກຍັງຈື່ໄດ້ວ່າເຂົາເຈົ້າມາຈາກໃສ

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ໂກຣິນໂທ 1:26-29)

1. ທ່ານໂປໂລໄດ້ພັລນາເຖິງຄຣິສຕຽນຊາວເມືອງໂກຣິນໂທເອົາໄວ້ວ່າ ແນວໃດແດ່?
2. ເປັນຫຍັງຈຶ່ງວ່າ ເຂົາເຈົ້າຄວນຈະມີຄວາມຮູ້ສຶກວ່າເປັນການຍ້ອງຍໍ ຫລາຍກວ່າຮູ້ສຶກວ່າເປັນການດູຖູກ?

3. ການບັນລະຍາຍຂອງທ່ານໂປໂລທີ່ໄດ້ບັນລະຍາຍເຖິງຄຣິສຕະຈັກເມືອງໂກຣິນໂທນັ້ນ ຖ້າປຽບທຽບໃສ່ຄຣິສຕະຈັກລາວຂອງພວກເຮົາໃນສມັຍນີ້ຈະເປັນແນວໃດ?
4. ເປັນຫຍັງຫລາຍຄຣິສຕະຈັກຈຶ່ງບັນລະຍາຍເຖິງເຣື່ອງຂອງເຂົາເຈົ້າເອງໃຫ້ກັບໂລກ ແລະໃຫ້ຊຶ່ງກັນ ແລະກັນ? ບັນຫາທີ່ແອບແຝງຢູ່ທີ່ສະແດງອອກມາໃຫ້ເຫັນນັ້ນແມ່ນຫຍັງ?
5. ເຮັດແນວໃດ ບັນດາຜູ້ທີ່ເຊື່ອຈະສາມາດມອງເບິ່ງຕົນເອງ ແລະຄົນອື່ນຈາກທັສນະຂອງພຣະເຈົ້າໄດ້?

3 . **<u>ຈິດວິນຍານທີ່ບໍ່ເຕີບໃຫຍ່:</u>** (1 ໂກຣິນໂທ 3:1-4)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 3:1-4
- ນຳພານັກຮຽນສົນທະນາເຖິງບັນຫາຂອງຄຣິສຕະຈັກເມືອງໂກຣິນໂທ.
- ເປັນຫຍັງຄຣິສຕຽນໃນເມືອງໂກຣິນໂທຈຶ່ງມີການແຕກແຍກກັນ?
- ການຈະເຣີນເຕີບໂຕທາງຈິດໃຈ ໝາຍຄວາມວ່າທ່ານບໍ່ຕ້ອງມີຄວາມແຕກຕ່າງກັບຄຣິສຕຽນຄົນອື່ນໆບໍ່?
- ເປັນຫຍັງຈຶ່ງວ່າການຈະເຣີນເຕີບໂຕທາງຈິດໃຈຈະນຳໄປສູ່ການເປັນອັນນຶ່ງອັນດຽວກັນເປັນຢ່າງດີ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 1 ໂກຣິນໂທ 3:1-4

1. ທ່ານໂປໂລເອີ້ນການແບ່ງແຍກຂອງຄຣິສຕຽນຊາວເມືອງໂກຣິນໂທວ່າແນວໃດ? ເພາະເຫດໃດ? ຖ້າລາວເອີ້ນໂບດຂອງທ່ານຢ່າງນັ້ນ ແລ້ວທ່ານຈະຄິດແນວໃດ? ເພາະເຫດໃດ?
2. ແມ່ນຫຍັງທີ່ກໍ່ໃຫ້ເກີດການແບ່ງແຍກກັນ ແລະກໍມີທ່າທີເໝືອນກັບເດັກນ້ອຍ?
3. ການສອນແບບເຄັ່ກ ກັບ ໄອສະຄຣີມ ແມ່ນຄວາມຕ້ອງການຂອງໂບດບໍ່?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕຽນແບ່ງແຍກຄຣິສຕະຈັກດ້ວຍກົດຣະບຽບໂດຍສ່ວນຕົວຈະບໍ່ເປັນທີ່ພໍພຣະທັຍຂອງອົງພຣະຜູ້ເປັນເຈົ້າ.
- ຄຣິສຕຽນທັງຫລາຍຄວນຢູ່ໃນການຖ່ອມຕົວ, ຫລີກເວັ້ນຈາກຄວາມຍິ່ງຈອງຫອງ ແລະຄວາມຊົ່ວຮ້າຍຕ່າງໆ
- ຖ້າຄຣິສຕຽນບໍ່ເຕີບໃຫຍ່ທາງຝ່າຍຈິດວິນຍານ ທຳເໝືອນບັນດາຜູ້ທີ່ບໍ່ເຊື່ອ ແລະທຳລາຍຊື່ສຽງຂອງຄຣິສຕະຈັກ.
- ຄຣິສຕຽນຄວນຈະຊອກສແວງຫາການເຕີບໃຫຍ່ ແລະຈະເຣີນຂຶ້ນໃນຄວາມຮູ້ ແລະເພີ້ມເຕີມຂຶ້ນດ້ວຍພຣະຄຳຂອງພຣະເຈົ້າຢ່າງສມ່ຳສເມີ ແລະໝັ້ນຄົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**